ວິທີການຂອງທະນາຄານໂລກ
ໃນການຄຸ້ມຄອງວຽກງານ ທາງດ້ານສັງຄົມ, ສິ່ງແວດລ້ອມ,
ການປົກຄອງ ແລະ ການເງິນ ຢູ່ໃນໂຄງການໄຟຟ້ານ້ຳຕົກນ້ຳເທີນ 2

ສປປລາວ

ພຶດສະພາ 2007

ກະລຸນາໃສ່ຮູບໜ້າປົກທີ່ນີ້

ວິທີການຂອງທະນາຄານໂລກ
ໃນການຄຸ້ມຄອງວຽກງານ ທາງດ້ານສັງຄົມ, ສິ່ງແວດລ້ອມ,
ການປົກຄອງ ແລະ ການເງິນ ຢູ່ໃນໂຄງການໄຟຟ້ານ້ຳເທີນ 2

ສປປລາວ

ພຶດສະພາ 2007

ສັງລວມເນື້ອໃນເອກະສານ
ບົດລາຍງານສະບັບທີ 7 ຂອງທີມງານທີ່ປຶກສາສາກົນ ກ່ຽວກັບໂຄງການໄຟຟ້ານ້ຳເທີນ 2

**ພາກສະເໜີ**

ທີມງານທີ່ປຶກສາສາກົນ ສຳລັບໂຄງການໄຟຟ້ານ້ຳເທີນ 2 ໄດ້ຈັດຕັ້ງປະຕິບັດວຽກງານ ໃນການທົບທວນການຈັດຕັ້ງປະຕິບັດໂຄງການ ຄັ້ງທີ 7 ຂອງຕົນ ຢູ່ໃນໄລຍະວັນທີ 5 - 16 ກຸມພາ 2007. ພວກເຂົາເຈົ້າໄດ້ເລີ່ມຕົ້ນ ດ້ວຍການເບິ່ງປະເດັນ ແລະ ບັນຫາທີ່ໜ້າເປັນຫ່ວງ ທີ່ໄດ້ຍົກໃຫ້ເຫັນຢູ່ໃນການທົບທວນການຈັດຕັ້ງປະຕິບັດໂຄງການຄັ້ງທີ 6, ຊຶ່ງໄດ້ສຶກສາຄົ້ນຄວ້າເບິ່ງ ການຄຸ້ມຄອງ ແລະ ລະບົບການຈັດຕັ້ງຂອງໂຄງການ, ເບິ່ງການແກ້ໄຂບັນຫາທາງດ້ານສິ່ງແວດລ້ອມ ແລະ ສັງຄົມ ໂດຍສົມທຽບໃສ່ລະດັບຂອງວຽກງານການກໍ່ສ້າງ, ຄວາມຊັກຊ້າ ຢູ່ໃນການຕັດໄມ້ອອກຈາກອ່າງເກັບນ້ຳ ຊຶ່ງສາມາດສ້າງຜົນກະທົບ ຕໍ່ການວາງແຜນໃນການກັກນ້ຳເຂົ້າໃນອ່າງ ຢູ່ທີ່ພູພຽງນາກາຍ, ການພັດທະນາຄວາມສາມາດ ແລະ ຊ່ອງຫວ່າງ ຫຼື ຂໍ້ຄົງຄ້າງທາງດ້ານຄວາມສາມາດ, ແລະສິ່ງທ້າທາຍທີ່ປະເຊີນໜ້າ ໂດຍໂຄງການໄຟຟ້ານ້ຳເທີນ 2 ຊຶ່ງຖືວ່າເປັນເຄື່ອງຈັກຂອງການພັດທະນາ ສຳລັບ ສປປ ລາວ ແລະ ປະຊາຊົນລາວ.

ໂດຍການມີຜູ້ຊ່ຽວຊານເພີ່ມຂຶ້ນອີກ 3 ຄົນຢູ່ໃນຂະແໜງວຽກງານດ້ານການປົກຄອງ ແລະ ການຄຸ້ມຄອງວຽກງານທາງດ້ານການເງິນຂອງລັດ, ບັນຫາທາງດ້ານສິ່ງແວດລ້ອມ, ແລະສັງຄົມ - ວັດທະນະທຳ ຂອງການພັດທະນາ, ການມີສ່ວນຮ່ວມຂອງປະຊາຊົນ, ການພັດທະນາຊຸມຊົນ ແລະ ບົດບາດຍິງຊາຍ, ທີມງານທີ່ປຶກສາສາກົນ ສາມາດສຶກສາຄົ້ນຄວ້າລົງເລິກ ບັນຫາຢູ່ໃນຂົງເຂດວຽກງານດັ່ງກ່າວນີ້.

**ຂໍ້ສັງເກດ, ຜົນທີ່ໄດ້ຮັບ ແລະ ຂໍ້ສະເໜີແນະນຳທີ່ສຳຄັນ**

**ດ້ານການຈັດຕັ້ງ**

- **ການຄຸ້ມຄອງ ແລະ ການປະສານງານຂອງໂຄງການ ໄດ້ຮັບການປັບປຸງຂຶ້ນ.** ໃນນາມເປັນສະຖາບັນນຳໜ້າ ວຽກງານທາງດ້ານການເງິນ ສຳລັບໂຄງການໄຟຟ້ານ້ຳຕົກນ້ຳ

ເທີນ 2, ທະນາຄານໂລກ ໄດ້ສ້າງການປ່ຽນແປງທີ່ສຳຄັນ ແລະ ເປັນດ້ານບວກ ໂດຍການໂອນເອົາຄວາມຮັບຜິດຊອບ ໃນການຄຸ້ມຄອງບໍລິຫານວຽກງານທີ່ສຳຄັນຈຳນວນໜຶ່ງ ຈາກຫ້ອງການໃຫຍ່ຂອງຕົນ ຢູ່ທີ່ກຸງວໍຊິງຕັນ ໄປໃຫ້ຫ້ອງການປະຈຳພາກພື້ນ ຢູ່ທີ່ບາງກອກ ແລະ ຫ້ອງການປະຈຳປະເທດ ຢູ່ນະຄອນຫຼວງວຽງຈັນ.

- ຜູ້ຈັດການຫ້ອງການຢູ່ໃນປະເທດ ຊຶ່ງປະຕິບັດໜ້າທີ່ໃນນາມເປັນຜູ້ປະສານງານ ຢູ່ຫ້ອງການທີ່ນະຄອນຫຼວງວຽງຈັນ ສຳລັບໂຄງການໄຟຟ້ານ້ຳຕົກນ້ຳເທີນ 2 ໄດ້ຮັບການມອບໝາຍໜ້າທີ່ວຽກງານ ເພື່ອເຂົ້າຮ່ວມໃນການຈັດຕັ້ງປະຕິບັດວຽກງານ ກັບລັດຖະບານແຫ່ງ ສປປ ລາວ ແລະ ບໍລິສັດໄຟຟ້ານ້ຳຕົກນ້ຳເທີນ 2 ໃນການແກ້ໄຂບັນຫາ ກ່ຽວກັບການດຳເນີນງານ. ວຽກງານດັ່ງກ່າວນີ້ ພາໃຫ້ນຳໄປເຖິງການປັບປຸງການປະສານງານ ຊຶ່ງສ່ວນໃຫຍ່ສາມາດແກ້ໄຂບັນຫາສຳຄັນ ທີ່ຍົກຂຶ້ນໃນການມາກວດກາໂຄງການຄັ້ງທີ່ຜ່ານມາ ຂອງທີມງານທີ່ປຶກສາສາກົນ ຄື: ການຍົກຍ້າຍຈັດສັນໝູ່ບ້ານ ແລະ ການຕັດໄມ້ອອກຈາກອ່າງເກັບນ້ຳ.
- ຫ້ອງການຂອງທະນາຄານໂລກ ຢູ່ທີ່ນະຄອນຫຼວງວຽງຈັນ ໄດ້ປັບປຸງພະນັກງານດ້ານວິຊາການ ແລະ ພະນັກງານຊ່ວຍວຽກຂອງຕົນ, ຢູ່ໃນໄລຍະຫຼັງນີ້ ຫ້ອງການດັ່ງກ່າວໄດ້ມີພະນັກງານ ຊຶ່ງເປັນຄົນລາວ ທີ່ມີຄວາມຮູ້ຄວາມສາມາດ ເປັນໜ້າພາກພູມໃຈ. ຜູ້ຊ່ຽວຊານຢູ່ໃນຂະແໜງການປະມົງ ແລະ ການປູກຝັງ ຕ້ອງໄດ້ພິຈາລະນາ ກ່ຽວກັບຈຸດທີ່ຕັ້ງຂອງເນື້ອທີ່ ສຳລັບວຽກງານກະສິກຳ ຂອງໂຄງການ ແລະ ຂອງພາກສ່ວນກະສິກຳ - ໂຄງການປັບປຸງຊີວິດການເປັນຢູ່ ຊຶ່ງອີງໃສ່ການປະມົງ ແມ່ນໄດ້ຖືກວາງແຜນໄວ້ສຳລັບເຂດພູພຽງ ແລະ ເຂດກ້ອງເຂື່ອນ.
- ລັດຖະບານແຫ່ງ ສປປ ລາວ ໄດ້ສ້າງຕັ້ງກະຊວງພະລັງງານ ແລະ ບໍ່ແຮ່ຂຶ້ນໃໝ່ ເພື່ອເອົາໃຈໃສ່ຫຼາຍຂຶ້ນ ຕໍ່ວຽກງານໃນຂະແໜງການທີ່ສຳຄັນ ເພື່ອການພັດທະນາ ແລະ ຂະຫຍາຍຕົວຂອງຊາດ. ຄະນະກຳມະການຊີ້ນຳ ໂຄງການໄຟຟ້ານ້ຳຕົກນ້ຳເທີນ 2 ໄດ້ຮັບການປັບປຸງ ຊຶ່ງມີຮອງນາຍົກລັດຖະມົນຕີ ຜູ້ປະຈຳການ (ສຳລັບການຄຸ້ມຄອງບໍລິຫານລັດຖະບານ) ເປັນປະທານຂອງຄະນະກຳມະການດັ່ງກ່າວ ແລະ ໄດ້ມີການຢັ້ງຢືນຄືນວ່າ ໂຄງການໄຟຟ້ານ້ຳຕົກນ້ຳເທີນ 2 ເປັນກົນຈັກທີ່ສຳຄັນ ຂອງການຂະຫຍາຍຕົວຢູ່ ສປປ ລາວ.
- ລັດຖະບານແຫ່ງ ສປປ ລາວ ໄດ້ສ້າງຕັ້ງຄະນະກຳມະການ ຊີ້ນຳການຂຸດຄົ້ນໄມ້ ອອກຈາກອ່າງເກັບນ້ຳ ເພື່ອຊີ້ນຳກວດກາວຽກງານດັ່ງກ່າວນີ້. ໜ່ວຍງານຄຸ້ມຄອງສິ່ງແວດລ້ອມ ຢູ່ແຂວງຄຳມ່ວນ ໄດ້ຮັບໜ້າທີ່ວຽກງານ ໃນການກວດກາເສັ້ນທາງເຂົ້າໄປຂຸດຄົ້ນ, ຊາຍແດນຂອງເຂດເນື້ອທີ່ຂຸດຄົ້ນ ແລະ ເຂດຕັດໄມ້ອອກຈາກອ່າງເກັບນ້ຳ. **ບັນຫາທີ່ສຳຄັນໃນປະຈຸບັນ ແມ່ນຈຳນວນຈຸລະມູນສານ ທີ່ສາມາດອະນຸຍາດໃຫ້ຮັກສາຢູ່ອ່າງເກັບນ້ຳໃນພູພຽງ ໂດຍບໍ່ສ້າງຜົນກະທົບທາງລົບ ຕໍ່ຄຸນນະ ພາບນ້ຳ. ບໍລິສັດໄຟຟ້ານ້ຳຕົກນ້ຳເທີນ 2 ໄດ້ວ່າຈ້າງທີ່ປຶກສາ ໃຫ້ທຳການສຶກສາ ເພື່ອແກ້ໄຂບັນຫາດັ່ງກ່າວນີ້.**

ທີມງານທີ່ປຶກສາສາກົນເຊື່ອວ່າ ວຽກງານດັ່ງກ່າວນີ້ຈະມີປະສິດທິພາບຫຼາຍຂຶ້ນ ແລະ ສາມາດເປັນໄປໄດ້ ໃນພາກປະຕິບັດຕົວຈິງ ດ້ວຍການເອົາຈຸລະມູນສານ ອອກຈາກ ເຂດໃດເຂດໜຶ່ງສະເພາະເທົ່ານັ້ນ ຊຶ່ງການສຶກສາທີ່ກຳລັງດຳເນີນຢູ່ນີ້ ສາມາດກຳນົດ ເຂດ ແລະ ຈຳນວນຈຸລະມູນສານທີ່ຈະຕ້ອງໄດ້ເອົາອອກ ຈາກອ່າງເກັບນ້ຳ, ໃນເມື ອການເອົາຈຸລະມູນສານທັງໝົດອອກນັ້ນ ເປັນວຽກງານທີ່ມີຄ່າໃຊ້ຈ່າຍສູງ ແລະ ໃຊ້ ເວລາ ແລະວຽກງານດັ່ງກ່າວນັ້ນ ກໍອາດຈະມີຜົນກະທົບດ້ານລົບໄດ້ເຊັ່ນກັນ.

- **ບໍລິສັດໄຟຟ້ານ້ຳຕົກນ້ຳເທີນ 2 ໄດ້ພັດທະນາແຜນງານ ເພື່ອເລັ່ງລັດການຈັດຕັ້ງ ປະຕິບັດວຽກງານ ໃຫ້ທັນກັບກຳນົດເວລາທີ່ສຳຄັນ ໃນການຈັດຕັ້ງປະຕິບັດໂຄງການ.** ການອ່ອຍນ້ຳຈາກນ້ຳເທີນ ໄດ້ຖືກຈັດຕັ້ງປະຕິບັດ ຢ່າງມີຜົນສຳເລັດ ໃນເດືອນມີນາ 2006. ເຂື່ອນກັ້ນນ້ຳຢູ່ທີ່ນາກາຍ ແລະ ລະບົບສິ່ງກໍ່ສ້າງທີ່ຕິດພັນນັ້ນ ໄດ້ຖືກສ້າງຂຶ້ນສຳ ເລັດປະມານ 50-55% ໃນການກະກຽມກັກນ້ຳເຂົ້າອ່າງເກັບນ້ຳ ຢູ່ໃນກາງປີ 2008. ໄດ້ ມີການຕົກລົງໃນການນຳໃຊ້ເສັ້ນທາງ ສຳລັບການກໍ່ສ້າງທີ່ມີຢູ່ໃນປະຈຸບັນ ເພື່ອຂົນສົ່ງ ໄມ້ທ່ອນທີ່ຕັດຈາກອ່າງເກັບນ້ຳ ເພື່ອເລັ່ງໃຫ້ວຽກງານການຕັດໄມ້ອອກຈາກອ່າງເກັບນ້ຳ ຢູ່ພູພຽງນາກາຍດຳເນີນໄປໄວຂຶ້ນ.
- **ການຍົກຍ້າຍຈັດສັນໝູ່ບ້ານ ແມ່ນມີຄວາມຄືບໜ້າດີ.** ໃນຈຳນວນ 17 ໝູ່ບ້ານທີ່ມີ 1,200 ຄອບຄົວໄດ້ຖືກຍົກຍ້າຍໄປຢູ່ພູພຽງນາກາຍ ກ່ອນທີ່ຈະມີການກັກນ້ຳເຂົ້າອ່າງ ເກັບນ້ຳ, 10 ໝູ່ບ້ານທີ່ມີ 600 ຄອບຄົວ ໄດ້ມີການຍົກຍ້າຍດ້ວຍຄວາມສະໝັກໃຈ ໄປ ຢູ່ສະຖານທີ່ສ້າງຕັ້ງບ້ານໃໝ່. ເປົ້າໝາຍຂອງໂຄງການ ແມ່ນຮຽກຮ້ອງໃຫ້ມີການຍົກ ຍ້າຍຈັດສັນຊຸມຊົນ ທີ່ບໍ່ທັນມີຄວາມເຂັ້ມແຂງ ໃຫ້ສຳເລັດໃນກາງປີ 2008.

ວຽກງານການກໍ່ສ້າງ

- ຂີ້ຝຸ່ນຈຳນວນຫຼວງຫຼາຍ ຍັງເປັນຂໍ້ຫຍຸ້ງຍາກ ຢູ່ໃນເຂດເນື້ອທີ່ກໍ່ສ້າງ. ເຕັກນິກໃນການ ປູກຫຍ້າ ໄດ້ຖືກນຳໃຊ້ (ມີການນຳໃຊ້ຫຍ້າເພື່ອຮັກສາຄວາມໝັ້ນຄົງ ຂອງໜ້າດິນທີ່ ຄ້ອຍຊັນ ແລະ ປ້ອງກັນການເຊາະເຈື່ອນຂອງດິນ) ຊຶ່ງຈຳເປັນຕ້ອງໄດ້ນຳມາສຶກສາ ຄົ້ນຄວ້າຄືນ ເພາະວ່າຫຍ້າຈຳນວນໜຶ່ງທີ່ປູກໄປນັ້ນ ໄດ້ແຫ້ງຕາຍ, ອາດຈະຍ້ອນຫຍ້າທີ່ ນຳໄປປູກນັ້ນແຫ້ງເກີນໄປ. ຜູ້ຮັບເໝົາກໍ່ສ້າງ ຈຳເປັນຕ້ອງໄດ້ຊອກຫາ ວິທີການໃນການ ແກ້ໄຂໄລຍະຍາວກວ່າ ເພື່ອແກ້ໄຂບັນຫາຂີ້ຝຸ່ນ ແທນທີ່ຈະເປັນພຽງການຮົດນ້ຳເທົ່າ ນັ້ນ. ການນຳໃຊ້ເກືອ ແລະ ເຕັກໂນໂລຊີອື່ນ ຄວນຈະນຳມາຄົ້ນຄວ້າ.
- **ການຕິດຕາມລະບົບຫາຍໃຈ ແລະ ການຕີລາຄາຜົນກະທົບຕໍ່ສຸຂະພາບ ຊຶ່ງຄວນຈະຖືກ ດຳເນີນໂດຍໜ່ວຍງານຄຸ້ມຄອງວຽກງານ ທາງດ້ານສຸຂະພາບ ຂອງບໍລິສັດໄຟຟ້າ ນ້ຳຕົກນ້ຳເທີນ 2 ແລະພາກສ່ວນທີ່ກ່ຽວຂ້ອງ ຂອງອຳນາດການປົກຄອງແຂວງ ຊຶ່ງມີສິດ ອຳນາດໃນເນື້ອທີ່ໂຄງການ.** ການຊົດເຊີຍຄ່າເສຍຫາຍ ຄວນຈະຖືກກຳນົດໃນເວລາມີ ຜົນກະທົບທາງລົບຕໍ່ສຸຂະພາບຂອງປະຊາຊົນ.

- ໃນເສັ້ນທາງທີ່ມີຄວາມຍາວປະມານ 140 ກິໂລແມັດ ທີ່ຖືກກໍ່ສ້າງ, ກໍ່ສ້າງຄືນ ຫຼື ຂະຫຍາຍອອກ **ຊຶ່ງເຮັດໃຫ້ບັນຫາກ່ຽວກັບ ຄວາມປອດໄພທາງດ້ານຖະໜົນ ກາຍມາເປັນບັນຫາທີ່ສຳຄັນ.** ຍານພາຫະນະທີ່ນຳໃຊ້ສຳລັບການກໍ່ສ້າງແລ່ນໄວເກີນໄປ, ສ້າງຄວາມເປັນອັນຕະລາຍຕໍ່ຊີວິດຂອງເດັກນ້ອຍ, ຊາວບ້ານ ແລະ ສັດທີ່ເດີນຕາມຖະໜົນ. ລະບົບການສົ່ງຂໍ້ມູນ, ການໃຫ້ການສຶກສາ ແລະ ການສື່ສານຢູ່ໃນບ້ານ ໄດ້ມີການຈັດຂະບວນການ ແລະ ແຜນການຝຶກອົບຮົມໃຫ້ແກ່ໂຮງຮຽນຕ່າງໆ ກ່ຽວກັບການຮັກສາຄວາມປອດໄພຕາມທ້ອງຖະໜົນ ຊຶ່ງມີເປົ້າໝາຍໃນການໃຫ້ຄວາມຮູ້ແກ່ຊາວບ້ານ ທີ່ບໍ່ເຄີຍຍ່າງຂ້າມເສັ້ນທາງທີ່ມີການສັນຈອນ. ເຄື່ອງໝາຍຕາມທ້ອງຖະໜົນ ແລະ ເຄື່ອງໝາຍເຕືອນໄພເປັນພາສາລາວ ຈະໄດ້ຖືກຕິດຕັ້ງຢູ່ຈຸດຍຸດທະສາດຕ່າງໆ.

**ການຍົກຍ້າຍຈັດສັນ**

- **ການຂາດເຂີນໄມ້ ເພື່ອສະໜອງໃຫ້ແກ່ການກໍ່ສ້າງ** ເຮັດໃຫ້ເກີດຄວາມຊັກຊ້າ ໃນການກໍ່ສ້າງເຮືອນຢູ່ອາໃສ ຢູ່ໃນເຂດຍົກຍ້າຍຈັດສັນ. ເຮືອນຢູ່ຊົ່ວຄາວໄດ້ຖືກສ້າງຂຶ້ນ ໂດຍຄາດຄະເນວ່າ ຈະມີການສະໜອງໄມ້ທີ່ມີຄຸນນະພາບດີ ໃນໄລຍະຕໍ່ໜ້າອັນນີ້ໆນີ້. ຕາມການຮ້ອງຂໍຂອງເຈົ້າແຂວງຂອງແຂວງຄຳມ່ວນ ແລະ ບໍລິຄຳໄຊ, ລັດຖະມົນຕີວ່າການກະຊວງກະສິກຳ ແລະ ປ່າໄມ້ ໄດ້ຕົກລົງຈັດສັນໄມ້ໃນຈຳນວນທີ່ເຫັນວ່າມີຄວາມຈຳເປັນ ສຳລັບການກໍ່ສ້າງເຮືອນຢູ່ໃນເຂດຍົກຍ້າຍຈັດສັນ ໂດຍມີການປະສານງານ ກັບສະມາຄົມປ່າໄມ້ຊາວບ້ານ.
- **ການສ້າງລາຍຮັບແບບໝັ້ນຄົງ ແລະ ການປັບຕົວແບບໝັ້ນຄົງ ທາງດ້ານວັດທະນະທຳແມ່ນບັນຫາທີ່ສຳຄັນ ຢູ່ໃນໝູ່ບ້ານໃນເຂດຍົກຍ້າຍຈັດສັນ.** ການຫັນປ່ຽນວິທີການໃນການດຳລົງຊີວິດ ມາແຕ່ດົນນານໃນການຖາງປ່າເຮັດໃຫ້, ຊຶ່ງຊຸມຊົນຢູ່ໃນລະດັບບ້ານ ຮູ້ຈັກວິທີຄຸ້ມຄອງ ຊຶ່ງເຮັດໃຫ້ຕົນຮູ້ສຶກເຖິງຄວາມປອດໄພ ແລະ ເປັນວິທີການທີ່ມີຄວາມຕິດພັນກັບ ຊີວິດການເປັນຢູ່ຂອງພວກເຂົາເຈົ້າ ໂດຍຫັນໄປມີຊີວິດແບບໃໝ່ ຊຶ່ງສາມາດໄດ້ຮັບການບໍລິການ ທາງດ້ານສາທາລະນະສຸກ, ການສຶກສາ, ການສະໜອງນ້ຳ ແລະ ທີ່ພັກອາໄສ, ແຕ່ບໍ່ມີຄວາມແນ່ນອນ ກ່ຽວກັບຄວາມຍືນຍົງ ຂອງສິ່ງດັ່ງກ່າວນີ້. ເຖິງວ່າວຽກງານທຸກຢ່າງຈະໄດ້ຮັບການວາງແຜນ ແລະ ຈັດຕັ້ງປະຕິບັດຢ່າງເອົາໃຈໃສ່, ວຽກງານດັ່ງກ່າວນີ້ ອາດຈະພາໃຫ້ສູນເສຍ ຄວາມເປັນເອກະລັກ ທາງດ້ານວັດທະນະທຳ ຫຼື ເຮັດໃຫ້ຄວາມເຊື່ອຖື ຂອງຊົນເຜົ່ານັ້ນຈາງຫາຍໄປ ແລະບາງຄັ້ງອາດຈະເປັນໄພຂົ່ມຂູ່ຕໍ່ການຢູ່ລອດ ຂອງກຸ່ມຊົນເຜົ່າໃດໜຶ່ງ. ລະດັບເປົ້າໝາຍຂອງລາຍຮັບອາດຈະມີຄວາມຫຍຸ້ງຍາກໃນການຮັກສາ ແລະ ອາດຈະບັງຄັບໃຫ້ປະຊາຊົນຕ້ອງຊອກຫາໂອກາດໃນການສ້າງລາຍຮັບຢູ່ແຫ່ງອື່ນ ຊຶ່ງອາດຈະສ້າງຜົນກະທົບຕໍ່ຄອບຄົວ ແລະ ວັດທະນະທຳຂອງພວກເຂົາເຈົ້າ. ການສືບຕໍ່ໃນການຕິດຕາມກວດກາວຽກງານ ໂດຍມີການປຶກສາຫາລືກັບປະຊາຊົນ, ຖ້າດີແທ້ຕ້ອງມີການນຳໃຊ້ ການສັງເກດການການ

ພັດທະນາຂອງມະນຸດແບບມີສ່ວນຮ່ວມ ແລະ ມີການປຶກສາຫາລືເປັນກຸ່ມ, ບໍ່ແມ່ນນຳໃຊ້ສະເພາະແຕ່ຄຳຖາມ ໃນການຕີລາຄາຈຳນວນວຽກງານ ແຕ່ຍັງລວມເຖິງການຕີລາຄາຄຸນນະພາບ ຂອງການປັບຕົວ ແລະ ລະດັບຄວາມກົດດັນ ທາງດ້ານວັດທະນະທຳ.

- **ເຫັນວ່າຍັງມີຄວາມສ່ຽງ ທີ່ຕ້ອງໄດ້ອີງໃສ່ການຊ່ວຍເຫຼືອ ຂອງບໍລິສັດໄຟຟ້ານ້ຳຕົກນ້ຳເທີນ 2 ເປັນໄລຍະຍາວ.** ຊຶ່ງຖືວ່າເປັນຜົນສະທ້ອນ ຂອງວຽກງານຍົກຍ້າຍຈັດສັນ ແລະ ການຊົດເຊີຍຄ່າເສຍຫາຍ ທີ່ກຳລັງດຳເນີນໄປ. ມາດຕະຖານກ່ຽວກັບການຖອນການຊ່ວຍເຫຼືອ ຕ້ອງໄດ້ນຳມາທົບທວນຄືນ. ມາດຕະຖານດັ່ງກ່າວນີ້ ຄວນອີງໃສ່ສະພາບການຕ່າງໆ ຊຶ່ງບາງຄັ້ງອາດບໍ່ສາມາດຄາດຄະເນໄວ້ໄດ້ໝົດ ຍ້ອນວ່າຍັງມີການດຳເນີນການຍົກຍ້າຍຈັດສັນ ແລະ ວຽກງານກ່ຽວກັບການປັບປຸງຊີວິດການເປັນຢູ່ ແມ່ນກຳລັງຖືກຈັດຕັ້ງປະຕິບັດ ແລະ ທົດສອບໄປພ້ອມກັນ.

**ຜົນກະທົບຢູ່ກ້ອງເຂື່ອນ ແລະ ໂຄງການສຳລັບເຂດກ້ອງເຂື່ອນ**

- ບໍລິສັດໄຟຟ້ານ້ຳຕົກນ້ຳເທີນ 2 ໄດ້ສຳເລັດການຈັດຕັ້ງປະຕິບັດແຜນງານ ເພື່ອຟື້ນຟູເຂດກ້ອງເຂື່ອນ ຢູ່ໃນເດືອນຕຸລາ ປີ 2006 ແລະ ໄດ້ອອກຄູ່ມືໃນການຈັດຕັ້ງປະຕິບັດວຽກງານ 1 ເດືອນຫຼັງຈາກນັ້ນ ໄດ້ມີການບັນຈຸຜົນຂອງການສຶກສາທາງດ້ານອຸທົກກະສາດ ຊຶ່ງມີການຄາດຄະເນ **ຂອບເຂດ ແລະ ປະລິມານຂອງຜົນກະທົບທາງລົບ ທີ່ອາດຈະເກີດຂຶ້ນ ຕໍ່ການດຳເນີນຊີວິດການເປັນຢູ່ (ການປະມົງ, ການປູກພືດ ແລະ ການລ້ຽງສັດ).** ໄພຂົ່ມຂູ່ດັ່ງກ່າວນີ້ໄດ້ເກີດຂຶ້ນ ຍ້ອນວ່າມີການສົ່ງນ້ຳ ຈາກອ່າງເກັບນ້ຳແຫ່ງໜຶ່ງໄປສູ່ແຫ່ງໜຶ່ງ ພາໃຫ້ບໍລິມາດນ້ຳເພີ່ມຂຶ້ນ ລວມທັງການໄຫຼຂອງນ້ຳຢູ່ເຊບັ້ງໄຟ.
- ບໍລິສັດໄຟຟ້ານ້ຳຕົກນ້ຳເທີນ 2 ຕ້ອງຮັບປະກັນວ່າລັດຖະບານແຫ່ງ ສປປ ລາວ, ໂດຍສະເພາະຢູ່ໃນຂັ້ນແຂວງ ເປັນພາກສ່ວນໜຶ່ງທີ່ໄດ້ຮັບຂໍ້ມູນປະຈຳວັນ ກ່ຽວກັບການພັດທະນາຢູ່ໃນແຜນງານພັດທະນາເຂດກ້ອງເຂື່ອນ ເພື່ອເຮັດໃຫ້ພວກເຂົາເຈົ້າ ສາມາດເຂົ້າຮ່ວມຢ່າງເປັນເຈົ້າການ ແລະ ມີປະສິດທິພາບ, ບໍ່ສະເພາະແຕ່ການທົບທວນ ແຜນພັດທະນາເຂດກ້ອງເຂື່ອນ ແຕ່ຍັງລວມໄປເຖິງການຈັດຕັ້ງປະຕິບັດ, ການຕິດຕາມກວດກາ ແລະ ຕີລາຄາ ແຜນພັດທະນາດັ່ງກ່າວ. **ການຕິດຕາມກວດກາວຽກງານແບບມີສ່ວນຮ່ວມ ແລະ ມີຄວາມຮັດກຸມຫຼາຍຂຶ້ນ ຕ້ອງຖືກຈັດຕັ້ງປະຕິບັດ ເພື່ອເຮັດໃຫ້ສາມາດກຳນົດບັນຫາໄດ້ໄວຂຶ້ນ ແລະ ສາມາດແກ້ໄຂບັນຫາໄດ້ຢ່າງທັນການ.**
- ລັດຖະບານແຫ່ງ ສປປ ລາວ, ໂດຍການປະສານງານກັບ ບໍລິສັດໄຟຟ້ານ້ຳຕົກນ້ຳເທີນ 2 ຕ້ອງມີແຜນການທີ່ຊັດເຈນ ໃນການເກັບ **ນ້ຳທີ່ເຫຼືອ** ເພື່ອການຊົນລະປະທານ ເພື່ອຮັບປະກັນໃຫ້ສາມາດສະໜອງນ້ຳໄດ້ຕະຫຼອດປີ ໃຫ້ແກ່ຊາວນາທີ່ຢູ່ກ້ອງເຂື່ອນ. ບໍລິສັດໄຟຟ້ານ້ຳຕົກນ້ຳເທີນ 2 ໄດ້ກຳນົດເງື່ອນໄຂຈຳນວນໜຶ່ງ ຊຶ່ງຮຽກຮ້ອງໃຫ້ມີຄວາມຕັດ

ສິນໃຈ ຈາກອຳນາດການປົກຄອງແຂວງ ແລະ ຊາວບ້ານກ່ອນທີ່ລະບົບຊົນລະປະທານດັ່ງກ່າວ ຈະສາມາດຖືກຈັດຕັ້ງປະຕິບັດ, ເງື່ອນໄຂໜຶ່ງແມ່ນການຈັດຕັ້ງຊາວນາ ໃຫ້ເປັນສະມາຄົມຜູ້ຊົມໃຊ້ນ້ຳ ແລະ ມີການເກັບຄ່າທຳນຽມໃນການນຳໃຊ້ນ້ຳ. ອຳນາດການປົກຄອງແຂວງ, ຊຶ່ງອາດຈະໄດ້ຮັບການຊ່ວຍເຫຼືອ ຈາກທະນາຄານໂລກ ແລະ ອົງການທີ່ບໍ່ແມ່ນໜ່ວຍງານຂອງລັດຖະບານ, ຄວນນຳເອົາແນວຄິດລິເລີ່ມດັ່ງກ່າວນີ້ ໄປຈັດຕັ້ງຊາວນາໃຫ້ກາຍເປັນສະມາຄົມຜູ້ຊົມໃຊ້ນ້ຳ ຊຶ່ງມີເພດຍິງເປັນສະມາຊິກ ຂອງສະມາຄົມດັ່ງກ່າວເຊັ່ນກັນ. ການສຶກສາກ່ຽວກັບການກຳນົດລາຄານ້ຳ ຄວນດຳເນີນໄປດ້ວຍການຊ່ວຍເຫຼືອ ທາງດ້ານວິຊາການຈາກທະນາຄານໂລກ. ຕາຕະລາງໃນການຈັດຕັ້ງປະຕິບັດວຽກງານດັ່ງກ່າວ ຄວນມີເວລາພຽງພໍສຳລັບການກໍ່ສ້າງ ໂຄງລ່າງພື້ນຖານອັນສຳຄັນກ່ອນທີ່ໂຄງການໄຟຟ້ານ້ຳຕົກນ້ຳເທີນ 2 ຈະເປີດດຳເນີນງານ.

- **ການພັດທະນາທາງເລືອກ ໃນການດຳລົງຊີວິດການເປັນຢູ່ ສຳລັບຊຸມຊົນທີ່ຢູ່ກ້ອງເຂື່ອນໄດ້ຮັບການປັບປຸງດີຂຶ້ນ.** ວຽກງານດັ່ງກ່າວນີ້ ອາດຈະນຳໄປເຖິງການຂະຫຍາຍຕົວ ແລະ ການແຂ່ງຂັນທາງດ້ານເສດຖະກິດ ໃນເມື່ອປະຊາຊົນຈຳນວນໜຶ່ງ ສາມາດເຮັດວຽກງານໄດ້ດີກວ່າຜູ້ອື່ນ. ການຊ່ວຍເຫຼືອທາງດ້ານວິຊາການ ແລະ ການສື່ສານລາຍງານຄວາມສ່ຽງທີ່ດີ ແລະ ການແກ້ໄຂບັນຫາທີ່ເໝາະສົມ ແມ່ນຄວນໄດ້ຮັບການສ້າງຕັ້ງຂຶ້ນ.
- **ການຕຳຜ້າ ຖືວ່າເປັນທາງເລືອກ ໃນການປັບປຸງຊີວິດການເປັນຢູ່ ທີ່ຕ້ອງການທີ່ສຸດສຳລັບຊາວບ້ານທີ່ເປັນເພດຍິງ.** ພວກເຂົາເຈົ້າໄດ້ຊີ້ໃຫ້ເຫັນຫຼາຍເຫດຜົນ ກ່ຽວກັບຄວາມສົນໃຈຂອງພວກເຂົາເຈົ້າ ຢູ່ໃນວຽກງານດັ່ງກ່າວນີ້. ສິ່ງສຳຄັນໃນນັ້ນ ແມ່ນຄວາມໝັ້ນຄົງທາງດ້ານການເງິນ ແລະ ຄວາມສາມາດໃນການບັນລຸເປົ້າໝາຍຂອງຕົນ ໃນການຮຽນຮູ້ການວິຊາຊີບອັນໃໝ່. ບໍລິສັດໄຟຟ້ານ້ຳຕົກນ້ຳເທີນ 2 ແລະ ທະນາຄານໂລກ ໄດ້ໃຫ້ການສະໜັບສະໜູນທາງດ້ານທຶນຮອນ ແກ່ວິສາຫະກິດທີ່ເກີດຂຶ້ນໃໝ່ດັ່ງກ່າວນີ້. ສະຫະພັນແມ່ຍິງລາວ ໄດ້ສະແດງໃຫ້ທີມງານທີ່ປຶກສາສາກົນ ເຫັນເຖິງຄວາມສົນໃຈທີ່ແຮງກ້າຂອງຕົນ ແລະ ຄວາມສາມາດໃນການໃຫ້ການຊ່ວຍເຫຼືອຜູ້ຍິງທ້ອງຖິ່ນ ຖ້າວ່າພວກເຂົາເຈົ້າໄດ້ຮັບການສະໜັບສະໜູນ ທາງດ້ານທຶນຮອນ ແລະ ວິຊາການທີ່ຈຳເປັນໃນການຈັດຕັ້ງປະຕິບັດວຽກງານດັ່ງກ່າວ.

## ການເຂົ້າຮ່ວມ ແລະ ການມີສ່ວນຮ່ວມ ຂອງອົງການຈັດຕັ້ງສັງຄົມ ແລະ ສະມາຄົມທີ່ບໍ່ຫາຜົນກຳໄລ

- ອົງການຈັດຕັ້ງທີ່ບໍ່ແມ່ນໜ່ວຍງານຂອງລັດຖະບານຈາກສາກົນ ໄດ້ມີການປະສານງານຢ່າງມີປະສິດທິພາບ ກັບລັດຖະບານແຫ່ງ ສປປ ລາວ ໃນການຈັດຕັ້ງປະຕິບັດແຜນງານລຶບລ້າງຄວາມທຸກຍາກ, ໂດຍມີຈຸດສຸມແກ້ໄຂບັນຫາ ຂອງປະຊາຊົນຜູ້ທຸກຍາກ, ຢູ່ຫ່າງໄກຊອກຫຼີກ ແລະ ບໍ່ມີຄວາມເຂັ້ມແຂງ; ຮັບປະກັນຄວາມຍືນຍົງ ທາງດ້ານສິ່ງແວດ

ລ້ອມ, ການເຂົ້າຮ່ວມຂອງປະຊາຊົນ ແລະ ການພັດທະນາຄວາມສາມາດ. **ທະນາຄານໂລກ, ລັດຖະບານແຫ່ງ ສປປ ລາວ ແລະ ບໍລິສັດໄຟຟ້ານໍ້າຕົກນໍ້າເທີນ 2 ຄວນສືບຕໍ່ ແລະ ປັບປຸງການຮ່ວມມືປະສານງານ ແລະ ມີການປຶກສາຫາລື ທີ່ມີປະສິດທິພາບກັບອົງການຈັດຕັ້ງ ທີ່ບໍ່ແມ່ນໜ່ວຍງານຂອງລັດຖະບານ ໃນລະດັບສາກົນ,** ຖອດຖອນບົດຮຽນຈາກການປະສານງານດັ່ງກ່າວ ເພື່ອຍົກລະດັບຄວາມສາມາດຂອງລັດຖະບານ ໃນການຈັດຕັ້ງປະຕິບັດແຜນງານ ທີ່ມີຄວາມໂປ່ງໃສ, ເປັນໜ້າທີ່ ແລະ ມີຄວາມຮັບຜິດຊອບຕໍ່ວຽກງານ ຕໍ່ປະຊາຊົນຂອງ ສປປ ລາວ. ສະມາຄົມທີ່ບໍ່ຫາຜົນກໍາໄລຈໍານວນໜຶ່ງຂອງ ສປປ ລາວ ຊຶ່ງມີເປົ້າໝາຍສະເພາະ ໃນຂົງເຂດວຽກງານສາທາລະນະສຸກ, ການຄຸ້ມຄອງຊັບພະຍາກອນ ແລະ ແກ້ໄຂບັນຫາທາງດ້ານເສດຖະກິດສັງຄົມ ໄດ້ເພີ່ມຂຶ້ນຢູ່ໃນລະດັບທ້ອງຖິ່ນ. ພວກເຂົາເຈົ້າໄດ້ເຮັດວຽກຢ່າງໃກ້ຊິດ ກັບໜ່ວຍງານຂອງລັດຖະບານ ໃນການຈັດຕັ້ງປະຕິບັດແຜນງານທີ່ກ່ຽວຂ້ອງ, ກຸ່ມຄົນດັ່ງກ່າວນີ້ ເປັນຊາວໜຸ່ມລາວ - ຜູ້ຍິງ ແລະ ຜູ້ຊາຍ ທີ່ມີຄວາມກະຕືລືລົ້ນ ແລະ ມີຄວາມເປັນໄປໄດ້ສູງໃນການຈັດຕັ້ງປະຕິບັດແຜນງານ ທີ່ສາມາດເຊື່ອມຕໍ່ຊຸມຊົນກັບແຜນງານເພື່ອການພັດທະນາຂອງລັດຖະບານ ໄດ້ຢ່າງມີປະສິດທິພາບ. **ລັດຖະບານແຫ່ງ ສປປ ລາວ ຄວນຊຸກຍູ້ການມີສ່ວນຮ່ວມ ຂອງສະມາຄົມທີ່ບໍ່ຫາຜົນກໍາໄລ ຊຶ່ງຫາກໍ່ເກີດຂຶ້ນຢູ່ ສປປ ລາວ.** ການຊຸກຍູ້ການຈັດຕັ້ງ ອົງການຈັດຕັ້ງສັງຄົມຢູ່ ສປປ ລາວ ຫຼື ສະມາຄົມທີ່ບໍ່ຫາຜົນກໍາໄລ ທີ່ສາມາດເຮັດວຽກໄດ້ຢ່າງມີປະສິດທິພາບ ກັບປະຊາຊົນຜູ້ທຸກຍາກ, ຜູ້ບໍ່ທັນມີຄວາມເຂັ້ມແຂງ ແລະ ຢູ່ຫ່າງໄກຊອກຫຼີກ ຈະສາມາດຊ່ວຍເພີ່ມທະວີ ຄວາມຕັດສິນໃຈຂອງອົງການເພື່ອນຮ່ວມງານ ໃນການພັດທະນາ ຕໍ່ບັນຫາວຽກງານທີ່ເກີດຂຶ້ນ ຢູ່ໃນລະດັບທ້ອງຖິ່ນ ແລະ ສາມາດແກ້ໄຂບັນຫາ ຕາມຄວາມຈໍາເປັນສະເພາະ ຂອງທ້ອງຖິ່ນ ແລະ ເປັນຂໍ້ມູນທີ່ພົວພັນເຖິງວັດທະນະທໍາ ແລະ ວຽກງານຊຶ່ງມີຄວາມສໍາຄັນ ເພື່ອຊຸກຍູ້ການຈັດຕັ້ງປະຕິບັດວຽກງານ ໃນລະດັບຊຸມຊົນໃຫ້ມີຜົນສໍາເລັດ.

## ການສື່ສານ ແລະ ຂໍ້ມູນຂ່າວສານ

- ສະມາຊິກຂອງຊຸມຊົນ ໄດ້ສະເໜີໃຫ້ທີມງານທີ່ປຶກສາສາກົນ ເຫັນເຖິງ **ຄວາມສັບສົນ ແລະ ຄວາມບໍ່ພໍໃຈກ່ຽວກັບວິທີການ ໃນການຈ່າຍຄ່າຊົດເຊີຍຄວາມເສຍຫາຍ ແກ່ທີ່ດິນ ແລະ ຜົນລະປູກທີ່ຖືກຈັດຕັ້ງປະຕິບັດໃນເມື່ອກ່ອນ.** ຊາວນາຈໍານວນໜຶ່ງ ຮູ້ສຶກວ່າ ບໍລິສັດໄຟຟ້ານໍ້າຕົກນໍ້າເທີນ 2 ບໍ່ມີຄວາມເປັນທໍາຍ້ອນວ່າຊາວນາຈໍານວນໜຶ່ງ ໄດ້ຮັບການຊົດເຊີຍທີ່ດີກວ່າ ເຖິງວ່າຈະມາຈາກເຂດດຽວກັນ. ເພື່ອຫລຸດຜ່ອນຊ່ອງຫວ່າງ ໃນການສະໜອງຂໍ້ມູນ, ລາຍລະອຽດກ່ຽວກັບ ລະບົບການຈ່າຍຄ່າຊົດເຊີຍຄວາມເສຍຫາຍ ຕ້ອງໄດ້ແຈ້ງໃຫ້ປະຊາຊົນຊາບຢ່າງຈະແຈ້ງ ໂດຍບໍລິສັດໄຟຟ້ານໍ້າຕົກນໍ້າເທີນ 2 ແລະ ລັດຖະບານແຫ່ງ ສປປ ລາວ. ຂັ້ນຕອນດັ່ງກ່າວນີ້ ຈໍາເປັນຕ້ອງໄດ້ມີການອະທິບາຍ, ລວມທັງການມີສ່ວນຮ່ວມ ຂອງອໍານາດການປົກຄອງທ້ອງຖິ່ນ ໂດຍສະເພາະການໃຊ້

ຈ່າຍທຶນຮອນ ເພື່ອຊົດເຊີຍຄວາມເສຍຫາຍ. ກ່ຽວກັບວຽກງານດັ່ງກ່າວນີ້ ສາມາດຈັດຕັ້ງປະຕິບັດວຽກງານໃຫ້ດີຂຶ້ນ ໂດຍສະເພາະໃນການສື່ສານກັບຊາວບ້ານ ດ້ວຍການນຳໃຊ້ວິທີການ ໃນການສື່ສານຕາມຮີດຄອງປະເພນີ ແລະ ແບບທັນສະໄໝ. ແລະຍັງມີຄວາມຈຳເປັນໃນການຕິດຕາມເອົາຄວາມຄິດຄວາມເຫັນ ຈາກຊາວບ້ານຢ່າງເປັນປະຈຳ, ແລະຢູ່ໃນຂະບວນການ ໃນການພັດທະນາຄວາມເຊື່ອໝັ້ນ ລະຫວ່າງອົງການຈັດຕັ້ງຕ່າງໆ.

**ການສ້າງຄວາມສາມາດ ແລະ ການສຶກສາ**

- ລະດັບວິຊາການ ແລະ ການສຶກສາຂອງລັດຖະມົນຕີ ຂອງລັດຖະບານແຫ່ງ ສປປ ລາວ ແລະ ພະນັກງານທີ່ສຳຄັນຈຳນວນໜຶ່ງ ພ້ອມທັງພະນັກງານຢູ່ໃນສະຖາບັນທີ່ສຳຄັນຂອງລັດຖະບານ ທີ່ໄດ້ເຂົ້າຮ່ວມວຽກງານໂຄງການໄຟຟ້ານ້ຳຕົກນ້ຳເທີນ 2 ແມ່ນເປັນໜ້າປະທັບໃຈ. ແຕ່ເຖິງຢ່າງໃດກໍຕາມ **ຈຳນວນພະນັກງານ ທີ່ໄດ້ຮັບການຝຶກອົບຮົມມາດີນັ້ນ ແມ່ນຍັງມີໜ້ອຍ ຖ້າສົມທຽບໃສ່ໜ້າທີ່ວຽກງານອັນໜັກໜ່ວງ ທີ່ພວກເຂົາເຈົ້າຕ້ອງໄດ້ຮັບຜິດຊອບ ເພື່ອຮັບປະກັນວ່າໂຄງການໄຟຟ້ານ້ຳຕົກນ້ຳເທີນ 2 ສາມາດນຳໄປສູ່ການຂະຫຍາຍຕົວ ແລະ ການພັດທະນາຂອງ ສປປ ລາວ ແລະ ປະຊາຊົນລາວ.** ຢູ່ໃນລະດັບແຂວງ, ເມືອງ ແລະ ບ້ານ, ຄວາມສາມາດຂອງພະນັກງານແຕ່ຂັ້ນທ້ອງຖິ່ນ ໄດ້ຮັບການພັດທະນາຂຶ້ນເປັນກ້າວໆ ເພື່ອເຮັດໃຫ້ພວກເຂົາເຈົ້າສາມາດ ຈັດຕັ້ງປະຕິບັດໜ້າທີ່ວຽກງານໃໝ່ຂອງຕົນ ພາຍໃຕ້ໂຄງການໄຟຟ້ານ້ຳຕົກນ້ຳເທີນ 2.
- **ຢູ່ໃນການລົງມາກວດກາໂຄງການຄັ້ງນີ້ ທີມງານທີ່ປຶກສາສາກົນ ໄດ້ເອົາໃຈໃສ່ຫຼາຍຂຶ້ນຕໍ່ການພັດທະນາຄວາມສາມາດ ຂອງປະຊາຊົນຢູ່ໃນເຂດເນື້ອທີ່ໂຄງການ.** ຍ້ອນວ່າໄດ້ມີການພົວພັນຢ່າງໃກ້ຊິດ ກັບປະຊາຊົນຜູ້ທີ່ໄດ້ຮັບຜົນກະທົບຈາກໂຄງການ ຢູ່ໃນໄລຍະລົງໄປຢ້ຽມຢາມສະຖານທີ່ໂຄງການ. ມີຊາວໜຸ່ມຈຳນວນໜຶ່ງ ໄດ້ເຂົ້າຮ່ວມໃນກອງປະຊຸມ ຊຶ່ງໄດ້ຍົກໃຫ້ເຫັນເຖິງ ຄວາມມຸ່ງມາດປາດຖະໜາ ຂອງພວກເຂົາເຈົ້າ ໃນການຍົກລະດັບການສຶກສາ ໃນຂະແໜງທຸລະກິດ, ການສິດສອນ, ການແພດໃຫ້ສູງຂຶ້ນ ເພື່ອໃຫ້ພວກເຂົາເຈົ້າ ສາມາດຊ່ວຍເຫຼືອຊຸມຊົນຂອງຕົນໄດ້. ໂດຍລວມແລ້ວພໍ່ແມ່ຂອງເຂົາເຈົ້າ ສະໜັບສະໜູນໃຫ້ພວກເຂົາເຈົ້າມີການສຶກສາ, ແຕ່ພວກເຂົາເຈົ້າມີຄວາມຢ້ານກົວວ່າ ລູກຂອງຕົນຈະບໍ່ກັບຄືນບ້ານ ຖ້າໄດ້ໄປອາໃສຢູ່ນະຄອນຫຼວງວຽງຈັນ ຫຼື ຕົວເມືອງໃຫຍ່ອື່ນໆ. ພໍ່ແມ່ໄດ້ຫວັງວ່າໂຄງການ ຈະນຳເອົາໂອກາດ ໃນການມີວຽກເຮັດງານທຳຢູ່ກັບທີ່ ໄປໃຫ້ແກ່ລູກຫຼານຂອງພວກເຂົາເຈົ້າ ທີ່ເປັນຜູ້ໃຫຍ່ແລ້ວ.
- ລັດຖະບານແຫ່ງ ສປປ ລາວ **ຄວນຮັບປະກັນວ່າ**ພາກສ່ວນໜຶ່ງຂອງ **ກອງທຶນເພື່ອຫລຸດຜ່ອນຄວາມທຸກຍາກ** ໄດ້ຖືກຈັດສັນໃຫ້ເພື່ອສ້າງຕັ້ງໂຮງຮຽນ ສຳລັບລະດັບມັດທະຍົມ ແລະ ໂຮງຮຽນວິຊາຊີບ ຊຶ່ງເປັນແຫຼ່ງຮອງຮັບທີ່ສົມເຫດສົມຜົນ ໃຫ້ແກ່ຊາວໜຸ່ມຢູ່ໃນ

ບ້ານຕ່າງໆ. ຄວນມີການສະໜອງທຶນການສຶກສາ ໃຫ້ແກ່ນັກຮຽນທີ່ຄວນໄດ້ຮັບການສຶກສາ ແລະ ຄວນຈັດສັນຢ່າງເປັນທຳໃຫ້ແກ່ແຂວງຕ່າງໆ, ໂດຍໃຫ້ບູລິມະສິດແກ່ບັນດາແຂວງ ຜູ້ທຸກຍາກ.

- **ລັດຖະບານຄວນຈັດແຜນງານ ໃນການໃຫ້ສິນເຊື່ອ ແລະ ການຝຶກອົບຮົມວຽກງານສ້າງລາຍຮັບ,** ໂດຍສະເພາະສຳລັບຊາວໜຸ່ມ ທີ່ບໍ່ໄດ້ເຂົ້າໂຮງຮຽນ (ຜູ້ຊາຍ ແລະ ຜູ້ຍິງ) ແລະ ສະຖາບັນທີ່ສາມາດສອນຫຼັກສູດ ສຳລັບຜູ້ທີ່ຮຽນບໍ່ທັນໝູ່. ທະນາຄານໂລກ, ໂດຍຜ່ານໂຄງການດ້ານສິ່ງແວດລ້ອມ ແລະ ສັງຄົມ ສຳລັບ ສປປ ລາວ ຄວນມີຄວາມເປັນເຈົ້າການຫຼາຍຂຶ້ນ ໃນການໃຫ້ການຊ່ວຍເຫຼືອ ລັດຖະບານແຫ່ງ ສປປ ລາວ ໃນການໂຄສະນາໂອກາດ ໃນການພັດທະນາຄວາມສາມາດ ຢູ່ໃນຂົງເຂດວຽກງານການຄຸ້ມຄອງຊັບພະຍາກອນທຳມະຊາດ, ວິສະວະກຳດ້ານສັງຄົມ ແລະ ຂົງເຂດວຽກງານທີ່ກ່ຽວຂ້ອງ ຊຶ່ງສາມາດສ້າງນັກສຶກສາ ສຳລັບຂະແໜງໄຟຟ້ານ້ຳຕົກ ແລະ ໂຄງການພັດທະນາອື່ນໆໃນອະນາຄົດ, ບໍ່ສະເພາະຢູ່ແຕ່ໃນນະຄອນຫຼວງວຽງຈັນ ແຕ່ລວມເຖິງແຂວງອື່ນໆນຳ.
- **ສະຫະພັນແມ່ຍິງລາວ.** ໄດ້ເຂົ້າຮ່ວມວຽກງານຢູ່ໃນໂຄງການໄຟຟ້ານ້ຳຕົກນ້ຳເທີນ 2 ທີ່ເປັນຫຼັກຖານເຫັນໄດ້ຢູ່ໃນລະດັບແຂວງ ແລະ ລະດັບເມືອງ ຊຶ່ງມີການໃຫ້ສິດອຳນາດແກ່ສະມາຊິກຂອງຕົນ ໂດຍການສົ່ງເສີມພວກເຂົາເຈົ້າ ຜ່ານລະບົບການໃຫ້ສິນເຊື່ອຂະໜາດນ້ອຍ ແລະ ໂຄງການປັບປຸງຊີວິດການເປັນຢູ່. ຖ້າເບິ່ງທາງດ້ານການສຶກສາແລ້ວ ທີມງານທີ່ປຶກສາສາກົນ ເຫັນວ່າຜູ້ຊາຍແມ່ນມີລະດັບການສຶກສາສູງກວ່າຜູ້ຍິງ. ມີການໃຫ້ໂອກາດ ແກ່ຫົວໜ້າຄອບຄົວຫຼາຍກວ່າ ໃນການເຂົ້າຮ່ວມວຽກງານຂອງກອງທຶນພັດທະນາບ້ານ. ສະຫະພັນແມ່ຍິງລາວ ຢູ່ໃນລະດັບເມືອງ ແລະ ສະມາຊິກຢູ່ໃນລະດັບບ້ານ ຄວນໄດ້ຮັບການຊຸກຍູ້ ແລະ ສົ່ງເສີມໃຫ້ເຂົ້າຮ່ວມວຽກງານຢ່າງເປັນເຈົ້າການຫຼາຍຂຶ້ນ ໃນການລາຍງານຄວາມຕ້ອງການ ຂອງຜູ້ຍິງຢູ່ໃນບ້ານ ໃຫ້ແກ່ຫ້ອງການໃຫຍ່ ຂອງສະຫະພັນແມ່ຍິງລາວ ທີ່ນະຄອນຫຼວງວຽງຈັນ ແລະ ເອົາຂໍ້ມູນກ່ຽວກັບບັນຫາ ທີ່ພວກເຂົາເຈົ້າປະເຊີນໜ້າ ລາຍງານໃຫ້ແກ່ລັດຖະບານ ນຳໄປພິຈາລະນາ.
- ຂໍ້ສັງເກດການອີກອັນໜຶ່ງ ທີ່ສຳຄັນຂອງທີມງານທີ່ປຶກສາສາກົນ **ເຫັນວ່າຍັງຂາດແຜນງານທີ່ເໝາະສົມ ສຳລັບຜູ້ເຖົ້າ ຫຼື ຜູ້ເສຍອົງຄະ ຢູ່ໃນເຂດທີ່ໄດ້ຮັບຜົນກະທົບຈາກໂຄງການ** ມີຜູ້ເຖົ້າຈຳນວນໜຶ່ງ ໂດຍສະເພາະຢູ່ເຂດກ້ອງເຂື່ອນ ຍັງສືບຕໍ່ເຮັດນາຂອງຕົນເປັນຕົ້ນຕໍ ແຕ່ວ່າມັນມີຄວາມຈຳເປັນ ໃນການເປີດໂອກາດໃຫ້ແກ່ພວກເຂົາເຈົ້າ ໃນການກະກຽມເພື່ອປະອາຊີບ ໃນການປູກຜັກຂອງຕົນ ຢູ່ໃນອະນາຄົດອັນນີ້ໆນີ້. ວຽກງານດັ່ງກ່າວນີ້ຍັງຄວນນຳໃຊ້ສຳລັບຜູ້ຊາຍ ແລະ ຜູ້ຍິງທີ່ເປັນຜູ້ເສຍອົງຄະ. ທະນາຄານໂລກ ແລະ ລັດຖະບານແຫ່ງ ສປປ ລາວ ຄວນພິຈາລະນາໃນການສ້າງແຜນງານລົບລ້າງການກີກໜັງສືທີ່ຈິງຈັງ ຢູ່ໃນໝູ່ບ້ານຕ່າງໆ ທີ່ເຫັນວ່າມີຄວາມເໝາະສົມ ສຳລັບຜູ້ທີ່ມີອາຍຸສູງ ຫຼື ຜູ້ໃຫຍ່ທີ່ມີຄວາມສົນໃຈ ໃນແຜນງານດັ່ງກ່າວນັ້ນໃຫ້ເຂົ້າຮ່ວມ. ສູນຝຶກ

ອົບຮົມເພື່ອພັດທະນາທັກສະ ຄວນໄດ້ຮັບການສ້າງຕັ້ງຂຶ້ນຢູ່ໃນຂັ້ນບ້ານ ເພື່ອສະໜອງໂອກາດໃຫ້ແກ່ຜູ້ຍິງ ແລະ ຜູ້ສູງອາຍຸ ໄດ້ຮັບການຝຶກອົບຮົມຫຼາຍຂຶ້ນ.

**ການຕິດຕາມກວດກາ ແລະ ຕີລາຄາໂຄງການ**

- ຢູ່ໃນການລົງຕິດຕາມກວດກາໂຄງການຄັ້ງທີ 6 ຂອງທີມງານທີ່ປຶກສາສາກົນ ໃນປີ 2006, ຊຶ່ງເປັນການຕິດຕາມກວດກາໂຄງການຄັ້ງທຳອິດ ກ່ຽວກັບການຈັດຕັ້ງປະຕິບັດໂຄງການໄຟຟ້ານ້ຳຕົກນ້ຳເທີນ 2, ບໍລິສັດໄຟຟ້ານ້ຳຕົກນ້ຳເທີນ 2 ໄດ້ຍົກໃຫ້ເຫັນຄວາມເປັນຫ່ວງເປັນໃຍຂອງຕົນ ກ່ຽວກັບຈຳນວນການຕິດຕາມກວດກາພາຍໃນ, ການຕິດຕາມກວດກາພາຍນອກ ແລະ ການຕິດຕາມກວດກາແບບເອກະລາດ ຊຶ່ງສ້າງຄວາມຫຍຸ້ງຍາກໃຫ້ແກ່ວຽກງານຂອງພວກເຂົາເຈົ້າ. ດັ່ງນັ້ນທີມງານທີ່ປຶກສາສາກົນ ຈຶ່ງໃຫ້ຄຳແນະນຳແກ່ບໍລິສັດໄຟຟ້ານ້ຳຕົກນ້ຳເທີນ 2, ລັດຖະບານແຫ່ງ ສປປ ລາວ ແລະ ທະນາຄານໂລກ ໃນການຕົກລົງກ່ຽວກັບໂຄງຮ່າງ ແລະ ແຜນງານຂອງແຜນການໃນການຕິດຕາມກວດກາໂຄງການຈາກພາຍນອກ ແລະ ພາຍໃນ ຊຶ່ງສາມາດຫລຸດຜ່ອນການລົງກວດກາໂຄງການໄດ້ ຢູ່ໃນໄລຍະເດືອນຕ່າງໆ (ໃນລະດູແລ້ງ).
- ຫຼັງຈາກການປິດການລະດົມທຶນ ຂອງໂຄງການໄຟຟ້ານ້ຳຕົກນ້ຳເທີນ 2 ໃນເດືອນມິຖຸນາ 2005 ຈົນມາເຖິງການຕິດຕາມກວດກາຄັ້ງນີ້ ຂອງທີມງານທີ່ປຶກສາສາກົນ ຊຶ່ງໄດ້ເຮັດວຽກມາລວມທັງໝົດເປັນເວລາ 639 ມື້, ຢູ່ໃນນີ້ 354 ມື້ (55%) ເປັນການຕິດຕາມໂຄງການຈາກພາຍນອກ, ຊຶ່ງສົມທຽບຕາມມາດຕະຖານທົ່ວໄປແລ້ວ ເຫັນວ່າເປັນການດຳເນີນງານທີ່ຊຸ້ນຊ້ຽວຫຼາຍ. ລະດັບຂອງການຕິດຕາມກວດກາວຽກງານ ສະແດງໃຫ້ເຫັນເຖິງຄວາມສຳຄັນຂອງໂຄງການ ຕໍ່ສະຖາບັນການເງິນ ແລະ ຜູ້ລົງທຶນ ຊຶ່ງບໍ່ສາມາດອະນຸຍາດໃຫ້ໂຄງການດັ່ງກ່າວນີ້ລົ້ມເຫຼວໄດ້.
- ໂຄງການໄຟຟ້ານ້ຳຕົກນ້ຳເທີນ 2 ໄດ້ຖືກກຳນົດຂຶ້ນໃນກອບ ຂອງສັນຍາສຳປະທານ, ດ້ວຍເຫດນັ້ນມັນມີຄວາມຈຳເປັນ ໃນການດຳເນີນວຽກງານ ໃນກອບຂອງສັນຍາດັ່ງກ່າວ. ສຳລັບວຽກງານໃນການຕິດຕາມກວດກາຕ່າງໆ ແມ່ນຈຳເປັນໃຫ້ມີປະສິດທິພາບ, ມີການປະສານງານຫຼາຍຂຶ້ນ. ບາງການຕິດຕາມໂຄງການ ສາມາດວາງແຜນຂຶ້ນໃຫ້ດຳເນີນໄປພ້ອມກັນ ແທນທີ່ຈະເປັນການດຳເນີນງານ ທີ່ຕໍ່ເນື່ອງກັນ.
- ທະນາຄານໂລກ ຕ້ອງໄດ້ປະຕິບັດໜ້າທີ່ຢ່າງເປັນເຈົ້າການ ໃນການສັງລວມ ແລະ ວິເຄາະບັນດາຂໍ້ສະເໜີແນະນຳທັງໝົດ ແລະ ກຳນົດການແກ້ໄຂບັນຫາ ຕໍ່ປະເດັນ ແລະ ບັນຫາໃດໜຶ່ງສະເພາະ, ເຊັ່ນບັນຫາທີ່ຍົກຂຶ້ນໂດຍ ທີມງານທີ່ປຶກສາສາກົນ, ແລະ ຄະນະທີ່ປຶກສາສາກົນ, ສະຖາບັນການເງິນສາກົນ ແລະ ອື່ນໆ ແລະ ຕ້ອງໄດ້ຕິດຕາມກວດກາ ກ່ຽວກັບການຈັດຕັ້ງປະຕິບັດວຽກງານ ຂອງສະຖາບັນທີ່ກ່ຽວຂ້ອງ. ຄວນມີການຈັດພິມບົດລາຍງານ ກ່ຽວກັບການຕິດຕາມກວດກາໂຄງການ ເປັນພາສາລາວ ເພື່ອໃຫ້ຄົນລາວມີຄວາມເຂົ້າໃຈ ແລະ ມີຄວາມຮັບຮູ້ຕໍ່ໂຄງການຫຼາຍຂຶ້ນ.

- ບໍລິສັດໄຟຟ້ານ້ຳຕົກນ້ຳເທີນ 2 ໄດ້ມີການສຶກສາຄົ້ນຄວ້າຢ່າງເລິກເຊິ່ງ ຕໍ່ບັນຫາຄວາມເປັນຫ່ວງເປັນໃຍດັ່ງກ່າວນີ້ ແລະໄດ້ມີການສະເໜີສ້າງຕັ້ງລະບົບຕິດຕາມ ໂຄງການໄຟຟ້ານ້ຳຕົກນ້ຳເທີນ 2 ໂດຍມີການພິຈາລະນາ 5 ຂັ້ນຕອນຂອງການຕິດຕາມກວດກາວຽກງານ ໂດຍຜູ້ກວດກາພາຍໃນ, ຜູ້ກວດກາຈາກພາຍນອກ ແລະ ຜູ້ກວດກາທີ່ເປັນເອກະລາດ. ມັນຈະເປັນການດີທີ່ສຸດ ສຳລັບທະນາຄານໂລກ ແລະ ລັດຖະບານແຫ່ງ ສປປ ລາວ ໃນການພິຈາລະນາ ແລະ ສະເໜີວິທີການແກ້ໄຂວຽກງານ ເພື່ອແກ້ໄຂບັນຫາດັ່ງກ່າວນີ້.
- ບັນຫາຊຶ່ງເກີດຂຶ້ນຈາກ ການຕິດຕາມໂຄງການ ທີ່ມີລັກສະນະເຄັ່ງຮ້ອນຄືດັ່ງກ່າວນີ້ ສາມາດເປັນສິ່ງສະກັດກັ້ນການຮັບຮອງວິທີການ ໃນການພັດທະນາໄຟຟ້ານ້ຳຕົກແບບຍືນຍົງຂອງໂຄງການໄຟຟ້ານ້ຳຕົກນ້ຳເທີນ 2 ຢູ່ໃນປະເທດ. ບັນຫາດັ່ງກ່າວນີ້ເປັນສ່ວນໜຶ່ງຂອງບົດຮຽນ ທີ່ຖອດຖອນໄດ້ຈາກໂຄງການ ເພື່ອເຮັດໃຫ້ບັນດາໂຄງການໃນອະນາຄົດ ມີລະບົບການຈັດການ ທາງດ້ານການເງິນ ທີ່ງ່າຍດາຍຂຶ້ນ ແລະ ມີການຕິດຕາມກວດກາວຽກງານ ທີ່ມີເປົ້າໝາຍຫຼາຍດ້ານ ຊຶ່ງຖືກວາງແຜນສ້າງຂຶ້ນມາດີ ເພື່ອຫລຸດຜ່ອນເວລາ ແລະ ຄວາມພະຍາຍາມ ຂອງພາກສ່ວນທີ່ກ່ຽວຂ້ອງ ໃນການຈັດຕັ້ງປະຕິບັດວຽກງານ.

**ການຄຸ້ມຄອງທາງດ້ານການເງິນ**

- ລະບົບການຄຸ້ມຄອງລາຍຮັບ ເພື່ອນຳໃຊ້ລາຍຮັບສຸດທິ ທີ່ໄດ້ຈາກໂຄງການໄຟຟ້ານ້ຳຕົກນ້ຳເທີນ 2 ຊຶ່ງໄດ້ມີການກຳນົດວ່າທຶນຮອນຂອງ ໂຄງການໄຟຟ້ານ້ຳຕົກນ້ຳເທີນ 2 ຈະບໍ່ຖືກຈ່າຍເຂົ້າງົບປະມານຂອງລັດຖະບານ ຈົນກວ່າລັດຖະບານ ຈະສາມາດສະແດງໃຫ້ເຫັນວ່າ **ຕົນເອງມີລະບົບຄຸ້ມຄອງ ທາງດ້ານການເງິນ ທີ່ມີຄຸນນະພາບທີ່ດີ** ເພື່ອຮັບປະກັນໃຫ້ລາຍຮັບດັ່ງກ່າວ ສາມາດນຳໄປເຖິງ ການເພີ່ມການບໍລິການ ເພື່ອຜົນປະໂຫຍດ ຂອງປະຊາຊົນຜູ້ທຸກຍາກ. ເຫັນວ່າມີຄວາມຈຳເປັນ ໃນການປັບປຸງລະບົບການຄຸ້ມຄອງ ທາງດ້ານການເງິນ ຂອງລັດຖະບານຫຼາຍຂຶ້ນ ຖ້າລັດຖະບານ ຢາກປະຕິບັດໄດ້ຕາມເງື່ອນໄຂ ທີ່ຕົນໄດ້ໃຫ້ຄຳໝັ້ນສັນຍາ. ທີມງານທີ່ປຶກສາສາກົນ ຂໍຮ້ອງໃຫ້ບັນດາອົງການເພື່ອນຮ່ວມງານ ຂອງລັດຖະບານແຫ່ງ ສປປ ລາວ ມີຄວາມກຽມພ້ອມ ໃນການຍອມຮັບກ່ຽວກັບ ຄວາມຍືດຢຸ່ນວຽກງານບາງດ້ານ. ອົງການດັ່ງກ່າວນັ້ນ ຄວນຮັບຮູ້ວ່າການປັບປຸງວຽກງານດັ່ງກ່າວນີ້ ເປັນຂະບວນການທີ່ຍາວນານ ແລະ ມີຄວາມສະລັບຊັບຊ້ອນ ແລະ ຕ້ອງໄດ້ຊັ່ງຊາເບິ່ງຄວາມຕັ້ງໃຈ ແລະ ຄວາມຕັດສິນໃຈ ໃນການຈັດຕັ້ງປະຕິບັດວຽກງານ.
- ຢູ່ໃນແຜນພັດທະນາເສດຖະກິດສັງຄົມ ໄລຍະປີ 2006-2010 ລັດຖະບານໄດ້ມີການກຳນົດຢ່າງຈະແຈ້ງວ່າ ບັນຫາບູລິມະສິດ ແມ່ນການນຳໃຊ້ງົບປະມານເພີ່ມເຕີມ ເພື່ອຊ່ວຍເຫຼືອປະຊາຊົນຜູ້ທຸກຍາກ ໃນດ້ານການສຶກສາ, ສາທາລະນະສຸກ, ການກໍ່ສ້າງໂຄງ

ລ່າງພື້ນຖານ ແລະ ວຽກງານກະສິກຳຢູ່ຊົນນະບົດ. ພວກເຮົາສະໜັບສະໜູນຄວາມຕັດສິນໃຈດັ່ງກ່າວນີ້ ຂອງລັດຖະບານ ແລະ ທະນາຄານໂລກ ເພື່ອຮັບປະກັນໃຫ້ມີການຕັດສິນ ໃນການນຳໃຊ້ງົບປະມານ ແລະ ການຄັດເລືອກແຜນງານໃດໜຶ່ງສະເພາະ ເພື່ອສະໜັບສະໜູນປະຊາຊົນຜູ້ທຸກຍາກ ຊຶ່ງຄວນກຳນົດຂຶ້ນຢູ່ໃນຍຸດທະສາດ ຂອງຂະແໜງການຕ່າງໆ. ກະຊວງແຜນການ ແລະ ການລົງທຶນ ຕ້ອງໄດ້ມີການດຳເນີນງານ ຢູ່ໃນຂອບເຂດການລົງທຶນ ແລະ ການໃຊ້ຈ່າຍທາງດ້ານບໍລິຫານທີ່ຈະແຈ້ງ ແລະ ຕ້ອງໄດ້ມີການຕີລາຄາຂໍ້ສະເໜີ ໃນການນຳໃຊ້ງົບປະມານ ໂດຍສົມທຽບກັບຈຸດປະສົງ ຂອງຍຸດທະສາດໃນຂະແໜງການທີ່ກ່ຽວຂ້ອງ.

- ແຜນງານທີ່ມີຄວາມມຸ່ງຫວັງສູງ ໃນການປັບປຸງການຄຸ້ມຄອງ ທາງດ້ານການເງິນຂອງລັດ-ແຜນງານປັບປຸງການຄຸ້ມຄອງ ການໃຊ້ຈ່າຍຂອງລັດ ແມ່ນກຳລັງຖືກຈັດຕັ້ງປະຕິບັດ. ແຜນງານດັ່ງກ່າວບໍ່ໄດ້ຖືກກົດດັນ ໂດຍແຜນງານຄຸ້ມຄອງລາຍຮັບ ຂອງໂຄງການໄຟຟ້ານ້ຳຕົກນ້ຳເທີນ 2 ແຕ່ ເປັນການຈັດຕັ້ງປະຕິບັດວຽກງານ ຕາມຈຸດປະສົງຂອງລັດຖະບານແຫ່ງ ສປປ ລາວ ເພື່ອປັບປຸງການຄຸ້ມຄອງ ທາງດ້ານການເງິນຂອງຕົນ. ສ່ວນປະກອບທີ່ສຳຄັນຂອງວຽກງານ ຢູ່ໃນແຜນງານປັບປຸງ ຄວາມສາມາດໃນການຄຸ້ມຄອງການໃຊ້ຈ່າຍຂອງລັດ ໄດ້ລວມເອົາການພັດທະນາ ລະບົບການຄຸ້ມຄອງຂໍ້ມູນຂ່າວສານແບບຮອບດ້ານ ຊຶ່ງເປັນລະບົບແບບອັດຕະໂນມັດ ທີ່ສາມາດໃນການບັນຈຸ ແລະ ວິໄຈໃບຮັບເງິນ ແລະ ການຈ່າຍເງິນ, ລະບົບການບັນຊີແບບໃໝ່ ທີ່ສາມາດຊີ້ໃຫ້ເຫັນໄດ້ການໃຊ້ຈ່າຍ ໂດຍສາມາດສະແດງໃຫ້ເຫັນ ຈຳນວນທີ່ໃຊ້ຈ່າຍ ແລະ ສະຖານທີ່ການໃຊ້ຈ່າຍ, ການວາງແຜນນຳໃຊ້ງົບປະມານ ບົນພື້ນຖານການຈັດປະເພດຜົນໄດ້ຮັບຂອງວຽກງານ ແລະ ລະບົບການກວດສອບບັນຊີ ຈາກພາຍນອກ ແລະ ພາຍໃນທີ່ມີປະສິດທິພາບ.
- ແຜນງານເພື່ອໃຫ້ການຊ່ວຍເຫຼືອ ແກ່ປະຊາຊົນຜູ້ທຸກຍາກສ່ວນໃຫຍ່ ຂອງລັດຖະບານແຫ່ງ ສປປ ລາວ ແມ່ນຖືກຈັດຕັ້ງປະຕິບັດ ຢູ່ໃນລະດັບແຂວງ ແລະ ລະດັບເມືອງ. ລະບົບການຄຸ້ມຄອງລາຍຮັບ ຈະເກີດປະສິດທິຜົນໄດ້ກໍຕໍ່ເມື່ອ ມີການປັບປຸງສາຍພົວພັນ ທາງດ້ານການເງິນລະຫວ່າງສູນກາງ ແລະ ທ້ອງຖິ່ນຄືນໃໝ່. ກົດໝາຍວ່າດ້ວຍງົບປະມານ ແລະ ດຳລັດຈັດຕັ້ງປະຕິບັດກົດໝາຍດັ່ງກ່າວ ຈະມີການລວມສູນລະບົບການເກັບລາຍຮັບ, ແລະກຳນົດໜ້າທີ່ໃຫ້ແຂວງ ໃນການສ້າງແຜນງົບປະມານຂອງຕົນຢູ່ໃນກອບຫຼັກການ ແລະ ບົດນຳໃນການສ້າງແຜນງົບປະມານຂອງຊາດ ແລະ ມີການຄຸ້ມຄອງລວມສູນທີ່ຮັດກຸມ ກ່ຽວກັບການຈັດຕັ້ງປະຕິບັດ ແລະ ການໃຊ້ຈ່າຍງົບປະມານຢູ່ໃນຄັງເງິນແຫ່ງຊາດ. ເພື່ອຮັບປະກັນໃຫ້ງົບປະມານຂອງແຂວງ ມີຄວາມສອດຄ່ອງກັບຈຸດປະສົງ ໃນການພັດທະນາຊາດ, ລະບົບຫຼັກການ ກ່ຽວກັບການສ້າງແຜນງົບປະມານ ຕ້ອງໄດ້ຖືກພັດທະນາຂຶ້ນ. ລະບົບການບັນຊີ ແລະ ການຄວບຄຸມວຽກງານ ຢູ່ໃນລະດັບແຂວງ, ການເກັບກຳຂໍ້ມູນ ກ່ຽວກັບການຈັດຕັ້ງປະຕິບັດວຽກງານ ທີ່ບໍ່ຢູ່ໃນຂະ

ແຜນງານເງິນ, ແລະຄວາມສາມາດ ຂອງການກວດສອບບັນຊີຢູ່ຂັ້ນແຂວງ ແລະ ຂັ້ນເມືອງ ແລະ ການຈັດຕັ້ງປະຕິບັດວຽກງານ ທີ່ບໍ່ແມ່ນວຽກງານດ້ານການເງິນ ແມ່ນມີຄວາມສຳຄັນ ເພື່ອຊຸກຍູ້ການຈັດຕັ້ງປະຕິບັດວຽກງານ ຕາມລະບົບແບບໃໝ່ນີ້. ວຽກງານດັ່ງກ່າວນີ້ ມັນຮຽກຮ້ອງໃຫ້ມີການຊ່ວຍເຫຼືອຢ່າງຫຼວງຫຼາຍ ເພື່ອຊຸກຍູ້ໃຫ້ມີການປ່ຽນແປງ. ເງື່ອນໄຂດັ່ງກ່າວນີ້ ແມ່ນມີຄວາມສຳຄັນ ຕໍ່ການປັບປຸງການຄຸ້ມຄອງລາຍຮັບ.

- **ສ້າງຄວາມເຂັ້ມແຂງ ໃຫ້ແກ່ການກວດສອບບັນຊີແຫ່ງຊາດ ໂດຍຜ່ານອົງການກວດສອບແຫ່ງລັດ** ຊຶ່ງເປັນວຽກງານໜຶ່ງທີ່ສຳຄັນ ການແຍກຕົວຂອງ ອົງການກວດສອບແຫ່ງລັດ ຈາກຫ້ອງວ່າການ ສຳນັກງານນາຍົກລັດຖະມົນຕີ ແລະ ຕ້ອງໄດ້ລາຍງານວຽກງານຂອງຕົນໂດຍກົງ ໃຫ້ແກ່ສະພາແຫ່ງຊາດ ເປັນບາດກ້າວທີ່ສຳຄັນ ໃນການຄຸ້ມຄອງບໍລິຫານລັດ ຢູ່ໃນ ສປປ ລາວ. ປະທານຂອງອົງການກວດສອບແຫ່ງລັດ ເຫັນບັນຫາໄດ້ຢ່າງຈະແຈ້ງວ່າ ການກຳນົດວຽກງານຄືດັ່ງກ່າວນັ້ນ ຈະສາມາດເຮັດໃຫ້ຜູ້ກ່ຽວ ລາຍງານວຽກງານໂດຍກົງ ໃຫ້ແກ່ປະຊາຊົນລາວ. ວຽກງານບູລິມະສິດຂອງອົງການກວດສອບແຫ່ງລັດ ແມ່ນການຍົກສູງຄວາມສາມາດ ໃນການກວດສອບທາງດ້ານການເງິນ ຊຶ່ງຖືວ່າເປັນອົງປະກອບທີ່ສຳຄັນອັນໜຶ່ງ ຂອງແຜນງານປັບປຸງຄວາມເຂັ້ມແຂງ ໃນການຄຸ້ມຄອງການໃຊ້ຈ່າຍຂອງລັດ.
- ອົງການກວດສອບແຫ່ງລັດ **ຄວນມີສິດໃນການກວດສອບບັນຊີ ຂອງບໍລິສັດໄຟຟ້ານ້ຳຕົກນ້ຳເທີນ 2**. ການກວດສອບບັນຊີໂດຍລະອຽດນັ້ນ ສາມາດຈັດຕັ້ງປະຕິບັດໄດ້ໂດຍຜູ້ກວດສອບບັນຊີຂອງບໍລິສັດ, ແຕ່ຢູ່ພາຍໃຕ້ການຄຸ້ມຄອງລວມ ຂອງອົງການກວດສອບແຫ່ງລັດ ແລະ ໂດຍມີການເຂົ້າຮ່ວມຂອງພະນັກງານ ຂອງອົງການກວດສອບແຫ່ງລັດ.
- ໂດຍລວມແລ້ວ, ທີມງານທີ່ປຶກສາສາກົນ ມີຄວາມຍິນດີທີ່ໄດ້ຮັບຮູ້ວ່າ ທະນາຄານໂລກໄດ້ດຳເນີນວຽກງານຮ່ວມກັບອົງການປົກຄອງ ແລະ ຄຸ້ມຄອງລັດຖະກອນ ກ່ຽວກັບການພັດທະນາແຜນງານ ເພື່ອປັບປຸງລະບົບຄຸ້ມຄອງລັດຖະກອນ ແລະ ມີຄວາມກຽມພ້ອມໃນການສືບຕໍ່ຮ່ວມມືຢ່າງໃກ້ຊິດກັບທະນາຄານໂລກ ແລະ ອົງການປົກຄອງ ແລະ ຄຸ້ມຄອງລັດຖະກອນ ໃນການຈັດຕັ້ງປະຕິບັດວຽກງານດັ່ງກ່າວນີ້.
- ທະນາຄານໂລກ ຄວນດຳເນີນວຽກງານຮ່ວມກັບ ຜູ້ໃຫ້ການຊ່ວຍເຫຼືອລາຍອື່ນໆ ລວມທັງການຊ່ວຍເຫຼືອແບບຫຼາຍຝ່າຍ ແລະ ແບບສອງຝ່າຍ ເພື່ອສ້າງຂໍ້ສະເໜີກ່ຽວກັບ [redacted] ໂດຍຖືເປັນວິທີການ ໃນການສັງລວມການຊ່ວຍເຫຼືອຂອງຜູ້ໃຫ້ທຶນ ເຂົ້າໃນການຈັດຕັ້ງປະຕິບັດວຽກງານ ຕາມຈຸດປະສົງຂອງແຜນງານ ວ່າດ້ວຍການປັບປຸງການຄຸ້ມຄອງການໃຊ້ຈ່າຍຂອງລັດ ແລະ [redacted].
- ລະດັບຄວາມຕັດສິນໃຈຂອງທະນາຄານໂລກ ຕໍ່ໂຄງການໄຟຟ້ານ້ຳຕົກນ້ຳເທີນ 2 ແລະຕໍ່ການປັບປຸງການຈັດຕັ້ງຢູ່ໃນ ສປປ ລາວ ເປັນວຽກງານທີ່ມີຄວາມເອົາໃຈໃສ່ສູງ. ໄດ້ມີ

ການພັດທະນາຄວາມຮູ້ ກ່ຽວກັບລະບົບການຈັດຕັ້ງ ແລະ ສາຍພົວພັນໃນການຮ່ວມມື ລະຫວ່າງລັດຖະບານແຫ່ງ ສປປ ລາວ ແລະ ຫ້ອງການຂອງທະນາຄານໂລກ ຢູ່ໃນປະເທດ ຊຶ່ງໄດ້ຮັບການສະໜັບສະໜູນ ຈາກຫ້ອງການຂອງທະນາຄານໂລກ ໃນລະດັບພາກພື້ນຢູ່ທີ່ບາງກອກ. ບໍລິສັດໄຟຟ້ານ້ຳຕົກນ້ຳເທີນ 2 ແລະ ແຜນງານສ້າງຄວາມເຂັ້ມແຂງໃຫ້ແກ່ການຄຸ້ມຄອງ ການໃຊ້ຈ່າຍຂອງລັດ ເປັນວຽກງານທີ່ດຳເນີນຢູ່ໃນບາດກ້າວທີ່ສຳຄັນ ຢູ່ໃນໄລຍະສາມປີຕໍ່ໜ້າ ແລະ ມັນມີຄວາມສຳຄັນ ທີ່ຕ້ອງໄດ້ຮັບປະກັນໃຫ້ສາມາດຮັກສາພະນັກງານ ຂອງທະນາຄານໂລກ ໃຫ້ມີຄວາມໝັ້ນຄົງ ຫຼາຍເທົ່າທີ່ຈະຫຼາຍໄດ້ ໃນໄລຍະເວລາດັ່ງກ່າວ ເພື່ອເພີ່ມທະວີຄວາມຄືບໜ້າ ໃນການຈັດຕັ້ງປະຕິບັດວຽກງານທີ່ໄດ້ປະຕິບັດມາແລ້ວ.

**ອະນາຄົດຂອງການພັດທະນາໄຟຟ້ານ້ຳຕົກ**

- ໂດຍມີແຜນການໃນການກໍ່ສ້າງ ໂຄງການໄຟຟ້ານ້ຳຕົກຫຼາຍແຫ່ງ ຢູ່ຕາມສາຍນ້ຳເທີນ, ລັດຖະບານແຫ່ງ ສປປ ລາວ ໄດ້ປະເຊີນໜ້າກັບສິ່ງທ້າທາຍ ໃນການຂະຫຍາຍບົດຮຽນ ແລະ ວິທີການໃນການຈັດຕັ້ງປະຕິບັດ ໂຄງການໄຟຟ້ານ້ຳຕົກນ້ຳເທີນ 2 ໄປສູ່ບັນດາໂຄງການ ທີ່ບໍ່ໄດ້ຮັບການສະໜັບສະໜູນ ທາງດ້ານທຶນຮອນ ຈາກທະນາຄານໂລກ ຫຼື ທະນາຄານພັດທະນາອາຊີ. ມາຮອດປະຈຸບັນ, ໂຄງການໄຟຟ້ານ້ຳຕົກນ້ຳເທີນ 2 ບໍ່ສາມາດຕີລາຄາໄດ້ວ່າ ເປັນໂຄງການຕົວແບບ ໃນເມື່ອໂຄງການດັ່ງກ່າວ ບໍ່ທັນຖືກກໍ່ສ້າງສຳເລັດ. ໃນທາງດຽວກັນ, ໃນການມີໜ້າຂອງທະນາຄານໂລກ ຢູ່ໃນລະດັບພາກພື້ນ ແລະ ຢູ່ຫ້ອງການທີ່ນະຄອນຫຼວງວຽງຈັນ ແມ່ນມີການປະເຊີນໜ້າ ກັບສິ່ງທ້າທາຍຫຼາຍດ້ານ ໃນການຮັບປະກັນວ່າ ມາດຕະຖານທີ່ກຳນົດໄວ້ຢູ່ໃນ ໂຄງການໄຟຟ້ານ້ຳຕົກນ້ຳເທີນ 2 ຕ້ອງຖືກນຳໄປຈັດຕັ້ງປະຕິບັດ ເພື່ອບໍ່ເຮັດໃຫ້ມີການແຕະຕ້ອງເປົ້າໝາຍລວມຂອງໂຄງການໄຟຟ້ານ້ຳຕົກນ້ຳເທີນ 2 ແລະ ບັນດາໂຄງການອື່ນໆທີ່ຄ້າຍຄືກັນນັ້ນ ແລະໃນເວລາດຽວກັນ ຕ້ອງໄດ້ມີການຮັບປະກັນ ການອະນຸລັກເຂດອ່າງໂຕ່ງ ທີ່ສາມາດສະໜອງນ້ຳໃຫ້ແກ່ສາຍນ້ຳເທີນ.
- ລັດຖະບານຄວນຈະມີ ການປະເມີນຜົນກະທົບ ແບບສະສົມຮອບດ້ານ ຂອງບັນດາໂຄງການໄຟຟ້ານ້ຳຕົກ ທີ່ສ້າງຂຶ້ນຢູ່ໃນສາຍແມ່ນ້ຳເທີນ ຢູ່ໃນລະບົບການຄຸ້ມຄອງອ່າງໂຕ່ງແບບຮອບດ້ານ. ວຽກງານດັ່ງກ່າວນີ້ ຄວນຕິດພັນກັບວຽກງານ ຂອງອ່າງໂຕ່ງແມ່ນ້ຳຂອງ ຊຶ່ງອ່າງໂຕ່ງຂອງນ້ຳເທີນ ຖືວ່າເປັນອ່າງໂຕ່ງຍ່ອຍໜຶ່ງ ຂອງອ່າງໂຕ່ງດັ່ງກ່າວ.
- ນະໂຍບາຍແຫ່ງຊາດ ວ່າດ້ວຍການພັດທະນາໄຟຟ້ານ້ຳຕົກ ຕ້ອງຖືກສ້າງຂຶ້ນໄວເທົ່າທີ່ຈະໄວໄດ້ ໂດຍລັດຖະບານແຫ່ງ ສປປ ລາວ ໃນເມື່ອມີຄວາມຮຽກຮ້ອງຕ້ອງການຫຼາຍຂຶ້ນ ໃນການພັດທະນາໄຟຟ້ານ້ຳຕົກ, ບໍ່ວ່າຈະເພື່ອການຊົມໃຊ້ຢູ່ພາຍໃນ ຫຼື ສົ່ງຂາຍໄປໃຫ້ປະເທດໃກ້ຄຽງ.

- ທະນາຄານໂລກ ແລະ ລັດຖະບານແຫ່ງ ສປປ ລາວ ຈຳເປັນຕ້ອງໄດ້ສ້າງເອກະສານ ທີ່ມີຂໍ້ມູນຂ່າວສານ ກ່ຽວກັບບັນດາໂຄງການ ທີ່ກຳລັງດຳເນີນຢູ່ທັງໝົດ ໃນ ສປປ ລາວ ຊຶ່ງມີສ່ວນພົວພັນກັບ ໂຄງການໄຟຟ້ານ້ຳຕົກນ້ຳເທີນ 2 ເພື່ອເຮັດໃຫ້ປະຊາຊົນລາວ ມີຄວາມເຂົ້າໃຈຫຼາຍຂຶ້ນ ແລະ ສາມາດສະໜອງຂໍ້ມູນໃຫ້ແກ່ ຜູ້ຕິດຕາມກວດກາໂຄງການ ຈາກພາຍນອກຕ່າງໆ ເຊັ່ນ: ທີມງານທີ່ປຶກສາສາກົນ.
- ມັນເຖິງເວລາແລ້ວ ສຳລັບບໍລິສັດໄຟຟ້ານ້ຳຕົກນ້ຳເທີນ 2, ລັດຖະບານແຫ່ງ ສປປ ລາວ ແລະ ທະນາຄານໂລກ ທີ່ຕ້ອງຈັດພິມບົດຮຽນທີ່ຖອດຖອນໄດ້ ຈາກການຈັດຕັ້ງປະຕິບັດ ໂຄງການໄຟຟ້ານ້ຳຕົກນ້ຳເທີນ 2 ແລະ ຄວາມສາມາດໃນການນຳໃຊ້ບົດຮຽນດັ່ງກ່າວ ເຂົ້າໃນການຈັດຕັ້ງປະຕິບັດ ໂຄງການໄຟຟ້ານ້ຳຕົກໃນອະນາຄົດ.
- ທະນາຄານໂລກ ຄວນພິຈາລະນາ ກ່ຽວກັບການເຂົ້າຮ່ວມກອງປະຊຸມ ຢູ່ໃນລະດັບສາກົນ ກ່ຽວກັບການຕີລາຄາຜົນສະທ້ອນ ຂອງການຊ່ວຍເຫຼືອ ເພື່ອການພັດທະນາ ຢູ່ໃນອະນຸພາກພື້ນແມ່ນ້ຳຂອງ ຊຶ່ງໄດ້ວາງແຜນຂຶ້ນ ໂດຍໂຄງການທີ່ບໍ່ແມ່ນໜ່ວຍງານຂອງລັດຖະບານ, ສະຖາບັນການສຶກສາ, ອົງການຈັດຕັ້ງສັງຄົມ ຢູ່ທີ່ Northern Illinois University, Dekalb, Illinois.

**ສະຫລຸບ**

ທີມງານທີ່ປຶກສາສາກົນ ມີຄວາມພາກພູມໃຈ ຕໍ່ຄວາມສົນໃຈ ແລະ ການຮ່ວມມື ຂອງພາກສ່ວນຕ່າງໆ ທີ່ໄດ້ປະກອບສ່ວນ ຕໍ່ບົດລາຍງານສະບັບນີ້, ໂດຍສະເພາະສະມາຊິກຂອງທີມງານ ມີຄວາມພາກພູມໃຈເປັນຢ່າງຍິ່ງ ຕໍ່ການຮັບຕ້ອນຂອງຊາວບ້ານ ຊຶ່ງໄດ້ໃຫ້ການຮັບຕ້ອນຢ່າງອົບອຸ່ນ ແລະ ຈິງໃຈຕໍ່ພວກເຮົາ ພ້ອມທັງໄດ້ເຊີນພວກເຮົາ ເຂົ້າຮ່ວມງານບາສີສູ່ຂວັນ ຕາມຮີດຄອງປະເພນີ. ພວກເຮົາຫວັງວ່າຜົນ ຂອງຄວາມພະຍາຍາມ ແບບມີສ່ວນຮ່ວມຂອງພວກເຮົາ ຈະໄດ້ສ້າງປະໂຫຍດ ແກ່ພວກເຂົາເຈົ້າ ແລະ ແກ່ປະຊາຊົນລາວທັງຊາດ.